ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ.....67......./ນຍ.

ນະຄອນຫລວງວຽງຈັນ, ວັນທີ...12...04...2006

# ດຳລັດ

## ວ່າດ້ວຍການຈັດຕັ້ງປະຕິບັດ

## ກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 01/99/ສພຊ, ລົງວັນທີ 03 ເມສາ 1999.
- ອີງຕາມການສະເໜີ ຂອງລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ຫັດຖະກຳ ສະບັບເລກທີ 279/ອຫ.ຫກ, ລົງວັນທີ 22 ມີນາ 2006.

## ນາຍົກລັດຖະມົນຕີອອກດຳລັດ:

**ມາດຕາ 1: ຈຸດປະສົງ**

ດຳລັດສະບັບນີ້ວາງອອກ ເພື່ອຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ກ່ຽວກັບການສ້າງຕັ້ງ, ການດັດສົມ, ການຄຸ້ມຄອງ, ການກວດກາ, ການປົກປັກຮັກສາສິ່ງແວດລ້ອມ, ການພັດທະນາ ແລະ ການສົ່ງເສີມກິດຈະການໂຮງງານອຸດສາຫະກຳປຸງແຕ່ງ ໃຫ້ມີປະສິດທິຜົນ, ຖືກຕ້ອງຕາມເປົ້າໝາຍ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

**ມາດຕາ 2: ກິດຈະການໂຮງງານ ອຸດສາຫະກຳປຸງແຕ່ງ**

ອຸດສາຫະກຳປຸງແຕ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ແມ່ນກວມເອົາກິດຈະການໂຮງງານອຸດສາຫະກຳປຸງແຕ່ງ ທີ່ທຳການເຄື່ອນໄຫວ ຊຶ່ງກຳນົດໄວ້ໃນມາດຕາ 8 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ.

ສຳລັບກິດຈະການອຸດສາຫະກຳປຸງແຕ່ງແບບຄອບຄົວ ທີ່ມີຂະໜາດຕ່ຳກວ່າໂຮງງານລະດັບ III ( ທີ່ມີຈຳນວນແຮງງານຫລຸດ 10 ຄົນ ຫລື ກຳລັງແຮງລວມ ຫລື ກຳລັງແຮງທຽບເທົ່າ ຂອງເຄື່ອງຈັກຫລຸດ 5 ແຮງມ້າລົງມາ ຫລື ມີຜົນກະທົບຕໍ່ສິ່ງແວດລ້ອມຕ່ຳ ) ທີ່ຍັງບໍ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ແມ່ນມອບໃຫ້ກະຊວງອຸດສາຫະກຳ ແລະ ຫັດຖະກຳ ຄົ້ນຄ້ວາ ແລະ ອອກລະບຽບການ ແລະ ນະໂຍບາຍສະເພາະ.

ມາດຕາ 3: ການສົ່ງເສີມອຸດສາຫະກຳປຸງແຕ່ງ

ເພື່ອປະຕິບັດທິດທາງໃນການຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ລັດຖະບານມີນະໂຍບາຍສົ່ງເສີມທຸກພາກສ່ວນເສດຖະກິດ ເຂົ້າໃນກິດຈະການໂຮງງານອຸດສາຫະກຳປຸງແຕ່ງ ຕາມທີ່ກຳນົດໄວ້ໃນພາກ III ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ແລະ ໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງ ປະກອບສ່ວນຊຸກຍູ້, ສົ່ງເສີມກິດຈະການໂຮງງານອຸດສາຫະກຳປຸງແຕ່ງ ຕາມນະໂຍບາຍຂອງຕົນໃນແຕ່ລະໄລຍະຢ່າງແຂງແຮງ ເຊັ່ນ:

3.1. ກະຊວງ ອຸດສາຫະກຳ ແລະ ຫັດຖະກຳ ມີໜ້າທີ່:

ສຶກສາ ການສ້າງແຜນແມ່ບົດການພັດທະນາອຸດສາຫະກຳປຸງແຕ່ງ ໃນຂອບເຂດທົ່ວປະເທດ; ສຳຫລວດ ແລະ ຄົ້ນຄ້ວາການສ້າງເຂດ, ນິຄົມອຸດສາຫະກຳ, ສະຖາບັນ ຫລື ສູນອຸດສາຫະກຳປຸງແຕ່ງ ເພື່ອອຳນວຍຄວາມສະດວກໃນການສ້າງຕັ້ງ ແລະ ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 44 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ.

3.2. ຄະນະກຳມະການແຜນການ ແລະ ການລົງທຶນ ມີໜ້າທີ່:

- ໂຄສະນາ, ເຜີຍແຜ່, ປຸກລະດົມ, ຂົນຂວາຍ ແລະ ແນະນຳກ່ຽວກັບນະໂຍບາຍ, ກົດໝາຍ ແລະ ລະບຽບການຕ່າງໆ ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ລົງທຶນເຂົ້າໃນກິດຈະການໂຮງງານອຸດສາຫະກຳປຸງແຕ່ງ.
- ປະສານສົມທົບລະຫວ່າງ ຂະແໜງການອຸດສາຫະກຳ ແລະ ຫັດຖະກຳ ກັບ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງເພື່ອກຳນົດໂຄງການບູລິມະສິດໃນແຕ່ລະໄລຍະ.
- ພິຈາລະນາການລົງທຶນພາຍໃນ ແລະ ຕ່າງປະເທດ ດ້ານອຸດສາຫະກຳປຸງແຕ່ງ ທີ່ໄດ້ຮັບໃບອະນຸຍາດລົງທຶນແລ້ວນັ້ນ ໃຫ້ໄດ້ດຳເນີນກິດຈະການໂດຍໄວ, ເພື່ອເປັນການຊຸກຍູ້ ແລະ ດຶງດູດການລົງທຶນໃນກິດຈະການນັ້ນ.

3.3. ກະຊວງ ກະສິກຳ ແລະ ປ່າໄມ້ ມີໜ້າທີ່:

- ຊຸກຍູ້, ສົ່ງເສີມການຜະລິດວັດຖຸດິບ ທາງດ້ານປະລິມານ ເພື່ອສະໜອງໃຫ້ແກ່ໂຮງງານອຸດສາຫະກຳປຸງແຕ່ງ ຕາມພາລະບົດບາດ ແລະ ຕາມລະບຽບການຂອງຕົນ. ສຳລັບວັດຖຸດິບຈາກແຫລ່ງທຳມະຊາດແມ່ນປະຕິບັດຕາມແຜນການຂຸດຄົ້ນຂອງລັດຖະບານ ໃນແຕ່ລະໄລຍະ.
- ຕິດຕາມ ແລະ ກວດກາ ວັດຖຸດິບຈາກກະສິກຳ ແລະ ປ່າໄມ້ ໃຫ້ຮັບປະກັນດ້ານຄຸນນະພາບ ເພື່ອປ້ອນເຂົ້າໂຮງງານອຸດສາຫະກຳປຸງແຕ່ງ.

3.4. ກະຊວງ ການເງິນ ມີໜ້າທີ່:

- ຄົ້ນຄ້ວານະໂຍບາຍເພື່ອລະດົມແຫລ່ງທຶນຈາກພາຍໃນ ແລະ ຕ່າງປະເທດ ທີ່ມີລັກສະນະດຶງດູດ ແລະ ທັງສາມາດແກ່ງແຍ້ງ ແຂ່ງຂັນ ເພື່ອສົ່ງເສີມການລົງທຶນຂອງຕ່າງປະເທດ ເຂົ້າໃນກິດຈະການໂຮງງານອຸດສາຫະກຳປຸງແຕ່ງ.
- ຄົ້ນຄ້ວານະໂຍບາຍພາສີ ແລະ ລະບົບສ່ວຍສາອາກອນໃນການຍົກເວັ້ນ ຫລື ຫລຸດຜ່ອນພາສີ ອາກອນ ເພື່ອຊຸກຍູ້, ສົ່ງເສີມການຜະລິດສິນຄ້າພາຍໃນ ເພື່ອການສົ່ງອອກ ແລະ ຍົກເວັ້ນ ຫລື ຫລຸດ

ຜ່ອນພາສີຂາເຂົ້າເຄື່ອງຈັກ, ອຸປະກອນ ແລະ ວັດຖຸດິບຮັບໃຊ້ການຜະລິດ, ປົກປ້ອງການຜະລິດພາຍໃນ ແລະ ຄົ້ນຄ້ວາພາສີ ສົ່ງອອກຜະລິດຕະພັນສໍາເລັດຮູບ ຕາມທີ່ລັດຖະບານ ໄດ້ກໍານົດບູລິມະສິດໄວ້.

- ຄົ້ນຄ້ວານະໂຍບາຍການເສັຍອາກອນຕາມເງື່ອນໄຂບູລິມະສິດຂອງລັດຖະບານ ເຊັ່ນ: ໄລຍະປໍ່ປະຕິບັດອາກອນຕົວເລກທຸລະກິດ, ອາກອນກໍາໄລ ຕາມນະໂຍບາຍສົ່ງເສີມອຸດສາຫະກໍາປຸງແຕ່ງ ໃນແຕ່ລະໄລຍະ.
- ພິຈາລະນາ ແລະ ອໍານວຍຄວາມສະດວກ ດ້ານເອກະສານທີ່ຈໍາເປັນໃນການນໍາເຂົ້າ, ການເຄື່ອນຍ້າຍວັດຖຸດິບ ແລະ ຜະລິດຕະພັນອຸດສາຫະກໍາ ທີ່ຜະລິດຢູ່ພາຍໃນປະເທດ ພ້ອມທັງການສົ່ງອອກ.

3.5. ທະນາຄານແຫ່ງ ສປປ ລາວ ມີໜ້າທີ່:

- ກໍານົດນະໂຍບາຍສິນເຊື່ອ, ນະໂຍບາຍອັດຕາດອກເບັ້ຍທີ່ເໝາະສົມ ເພື່ອສົ່ງເສີມອຸດສາຫະກໍາປຸງແຕ່ງ.
- ຄົ້ນຄ້ວາ ແລະ ສ້າງກົນໄກ, ນະໂຍບາຍລະດົມທຶນ ທີ່ຫລາກຫລາຍ ໂດຍສະເພາະແມ່ນການລະດົມທຶນໃນໄລຍະຍາວ.
- ສ້າງ ແລະ ປັບປຸງກົນໄກ ລະບຽບການບໍລິການທີ່ສະດວກສະບາຍ ແລະ ທັນສະໄໝຍິ່ງຂຶ້ນ; ສ້າງເງື່ອນໄຂໃຫ້ຜູ້ປະກອບການສາມາດເຂົ້າເຖິງການບໍລິການດ້ານການເງິນໄດ້ຢ່າງວ່ອງໄວ.

3.6. ກະຊວງ ການຄ້າ ມີໜ້າທີ່:

ຄົ້ນຄວ້ານະໂຍບາຍ ແລະ ວິທີການສົ່ງເສີມ ແລະ ການປົກປ້ອງຜະລິດຕະພັນອຸດສາຫະກໍາປຸງແຕ່ງທີ່ຜະລິດໄດ້ຢູ່ພາຍໃນປະເທດເພື່ອທົດແທນການນໍາເຂົ້າ ແລະ ສົ່ງອອກ ເຊັ່ນ:

- ຄົ້ນຄ້ວາຂໍ້ມູນ, ຂ່າວສານທາງດ້ານສິນຄ້າ, ການຕະຫລາດ, ລາຄາ ພ້ອມທັງຊອກຕະຫລາດ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຮອງຮັບໃຫ້ແກ່ການຈໍາໜ່າຍຜະລິດຕະພັນອຸດສາຫະກໍາ ແລະ ຫັດຖະກໍາປຸງແຕ່ງ ດ້ວຍຮູບການຕ່າງໆ.
- ຫລຸດຜ່ອນຂັ້ນຕອນການປະກອບເອກະສານ ການນໍາເຂົ້າເຄື່ອງຈັກ, ພາຫະນະ ແລະ ເຄື່ອງມືອຸປະກອນຮັບໃຊ້ການຜະລິດໃນໂຮງງານ ແລະ ການສົ່ງອອກສິນຄ້າຈາກໂຮງງານ ໄປຕ່າງປະເທດໃຫ້ມີຫລາຍຮູບການເຊັ່ນ: ລະບົບການສົ່ງສິນຄ້າອອກທາງໄປສະນີ, ລະບົບການສົ່ງສິນຄ້າອອກກັບທີ່ ແລະ ລວມທັງການເຄື່ອນຍ້າຍສິນຄ້າອຸດສາຫະກໍາປຸງແຕ່ງ ທີ່ຜະລິດຢູ່ພາຍໃນປະເທດ.
- ກໍານົດນະໂຍບາຍປົກປ້ອງ ແລະ ສົ່ງເສີມການຜະລິດພາຍໃນເພື່ອທົດແທນການນໍາເຂົ້າ ແລະ ສົ່ງອອກ ໃນແຕ່ລະໄລຍະ.

3.7. ບັນດາກະຊວງ ແລະ ອົງການອື່ນໆທີ່ກ່ຽວຂ້ອງ ມີໜ້າທີ່ສົ່ງເສີມດັ່ງນີ້:

- ກະຊວງຄົມມະນາຄົມ, ຂົນສົ່ງ, ໄປສະນີ ແລະ ກໍ່ສ້າງ ມີໜ້າທີ່ ອໍານວຍຄວາມສະດວກໃນການຈັດສັນເຂດອຸດສາຫະກໍາ, ສະຖານທີ່ຕັ້ງ, ກໍານົດລະອຽດ ກ່ຽວກັບ ມາດຕະຖານວັດສະດຸກໍ່ສ້າງ ແລະ ພາຫະນະຂົນສົ່ງ ທີ່ຜະລິດພາຍໃນປະເທດ.
- ກະຊວງ ສຶກສາທິການ ມີໜ້າທີ່ ສ້າງ, ຂະຫຍາຍ ແລະ ພັດທະນາວິຊາຊີບອຸດສາຫະກໍາປຸງແຕ່ງທັງໃນ ແລະ ນອກລະບົບເພື່ອຊຸກຍູ້ ກິດຈະການອຸດສາຫະກໍາປຸງແຕ່ງໃຫ້ຂະຫຍາຍຕົວ ແລະ ທັນເປັນທັນສະໄໝເທື່ອລະກ້າວ.

- ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ ມີໜ້າທີ່ ສ້າງ ແລະ ພັດທະນາສີມືແຮງງານ ແລະ ຄວາມສາມາດທາງດ້ານວິຊາການ ໃຫ້ແກ່ກິດຈະການ ໂຮງງານອຸດສາຫະກຳປຸງແຕ່ງ.
- ອົງການ ວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ມີໜ້າທີ່:
  - ຄົ້ນຄ້ວາ ແລະ ເຜີຍແຜ່ເຕັກໂນໂລຊີການຜະລິດອຸດສາຫະກຳປຸງແຕ່ງທີ່ກ້າວໜ້າ ແລະ ແທດເໝາະກັບສະພາບຈຸດພິເສດຂອງ ສປປ ລາວ.
  - ຄົ້ນຄ້ວາ, ສົ່ງເສີມ ແລະ ຮັບຮອງ ມາດຕະຖານຜະລິດຕະພັນອຸດສາຫະກຳປຸງແຕ່ງ ໃຫ້ມີຄວາມກ້າວໜ້າ ແລະ ເທົ່າທຽມກັບລະບົບສາກົນເທື່ອລະກ້າວ.
- ກະຊວງ ສາທາລະນະສຸກ ມີໜ້າທີ່ ສົ່ງເສີມ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນອຸດສາຫະກຳປຸງແຕ່ງ ປະເພດອາຫານ, ເຄື່ອງດື່ມ ແລະ ຢາປົວພະຍາດ ທີ່ຜະລິດຢູ່ພາຍໃນປະເທດ ເພື່ອຊຸກຍູ້ໃຫ້ຮັບປະກັນຄວາມປອດໄພໃຫ້ແກ່ຜູ້ຊົມໃຊ້.
- ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ ມີໜ້າທີ່ ໂຄສະນາ, ເຜີຍແຜ່ ແລະ ສົ່ງເສີມເຂົ້າໃນການຜະລິດ ແລະ ການຊົມໃຊ້ຜະລິດຕະພັນອຸດສາຫະກຳປຸງແຕ່ງ ພາຍໃນ.

3.8. ບັນດາກະຊວງ, ອົງການທຽບເທົ່າ, ອົງການຈັດຕັ້ງມະຫາຊົນ, ອຳນາດການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ມີໜ້າທີ່ປະສານສົມທົບ, ຮ່ວມມື ແລະ ນຳເອົາແຜນພັດທະນາອຸດສາຫະກຳປຸງແຕ່ງ ໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຕາມນະໂຍບາຍຂອງລັດຖະບານ, ຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງໃນແຕ່ລະໄລຍະ.

## ມາດຕາ 4: ການອອກໃບອະນຸຍາດດຳເນີນກິດຈະການໂຮງງານ

ການສ້າງຕັ້ງໂຮງງານແມ່ນປະຕິບັດໄດ້ທັນທີ ພາຍຫລັງທີ່ໄດ້ປະຕິບັດຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ ເຊັ່ນ: ການໄດ້ຮັບອະນຸຍາດລົງທຶນ, ການຂຶ້ນທະບຽນວິສາຫະກິດ, ການຂຶ້ນທະບຽນອາກອນ, ການອະນຸຍາດປຸກສ້າງເຄຫະສະຖານ, ການຢັ້ງຢືນວິຊາການທີ່ຈຳເປັນ ແລະ ອື່ນໆທີ່ກ່ຽວຂ້ອງ.

ການອອກໃບອະນຸຍາດດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງ ຕາມທີ່ກຳນົດໄວ້ໃນມາດຕາ 11 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ແມ່ນຈະອອກໃຫ້ພາຍຫລັງທີ່ໂຮງງານໄດ້ສ້າງຕັ້ງສຳເລັດຖືກຕ້ອງຕາມລະບຽບການ, ຊຶ່ງກະຊວງອຸດສາຫະກຳ ແລະ ຫັດຖະກຳ ເປັນຜູ້ອອກ ຂໍ້ກຳນົດ, ກົດລະບຽບລະອຽດ ກ່ຽວກັບສະຖານທີ່ຕັ້ງໂຮງງານ, ມາດຕະຖານຂອງອາຄານໂຮງງານ ຫລື ສະຖານທີ່ທຳການຜະລິດ, ມາດຕະຖານການຕິດຕັ້ງເຄື່ອງຈັກ ແລະ ອຸປະກອນການຜະລິດ, ມາດຕະຖານຄວາມປອດໄພ ແລະ ສຸກຂະອະນາໄມຂອງໂຮງງານ, ມາດຕະການປົກປັກຮັກສາສິ່ງແວດລ້ອມຂອງໂຮງງານ, ສິດທິບັດ, ກຳນົດໝາຍເສດຖະກິດ-ເຕັກນິກຂອງການຜະລິດ ແລະ ມາດຕະຖານຂອງຜະລິດຕະພັນ.

## ມາດຕາ 5: ການຄຸ້ມຄອງທາງດ້ານວິຊາການ ຂອງຂະແໜງການກ່ຽວຂ້ອງ

ກ່ອນການອອກອະນຸຍາດສ້າງຕັ້ງ, ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງ ທີ່ມີສ່ວນພົວພັນກັບລະບຽບການຄຸ້ມຄອງມະຫາພາກກັບຂະແໜງການອື່ນ ເຊັ່ນ: ໂຮງງານອຸດສາຫະກຳປຸງແຕ່ງຜົນຜະລິດກະສິກຳ ແລະ ປ່າໄມ້ ຕ້ອງມີການຢັ້ງຢືນເປັນລາຍລັກອັກສອນຈາກຂະແໜງກະສິກຳ ແລະ ປ່າໄມ້. ເຊັ່ນດຽວກັນ, ສຳລັບບາງອຸດສາຫະກຳ ເຊັ່ນ: ອຸດສາຫະກຳປຸງແຕ່ງແຮ່ທາດ, ອຸດສາຫະກຳປຸງແຕ່ງອາຫານ, ເຄື່ອງດື່ມ ແລະ ຢາ, ອຸດສາຫະກຳປຸງແຕ່ງອຸປະກອນການແພດ, ອຸປະກອນການສຶກສາ, ອຸດສາຫະກຳຜະລິດສິ້ນສ່ວນ ແລະ ປະກອບພາຫະນະ, ເຄື່ອງໃຊ້ໄຟຟ້າ ແລະ ອຸດສາຫະກຳປຸງແຕ່ງອື່ນໆ ຕ້ອງໄດ້ມີການຢັ້ງຢືນທາງດ້ານວິຊາການຈາກອົງການທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ.

**ມາດຕາ 6: ການຄຸ້ມຄອງການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງ**

ການຄຸ້ມຄອງການດຳເນີນກິດຈະການໂຮງງານ ອຸດສາຫະກຳປຸງແຕ່ງ ຕ້ອງໃຫ້ສອດຄ່ອງກັບນະໂຍບາຍ, ແຜນຍຸດທະສາດ ແລະ ແຜນແມ່ບົດການພັດທະນາອຸດສາກຳປຸງແຕ່ງ. ລັດຖະບານ ມອບໃຫ້ກະຊວງ ອຸດສາຫະກຳ ແລະ ທັດຖະກຳ ເປັນເຈົ້າການປະສານສົມທົບກັບ ກະຊວງທີ່ກ່ຽວຂ້ອງ ເປັນຜູ້ຜັນຂະຫຍາຍລະອຽດ ຄົ້ນຄ້ວາ ອອກຂໍ້ຕົກລົງ, ຄຳສັ່ງ,,ຄຳແນະນຳ, ແຈ້ງການ, ຄູ່ມືທາງດ້ານເຕັກນິກ ແລະ ນະໂຍບາຍສົ່ງເສີມ ລະອຽດທີ່ຈຳເປັນໃນການຄຸ້ມຄອງການດຳເນີນກິດຈະການອຸດສາຫະກຳປຸງແຕ່ງ, ໂດຍສອດຄ່ອງກັບສະພາບການຕົວຈິງໃນແຕ່ລະໄລຍະ ເພື່ອສົ່ງເສີມ, ພັດທະນາ, ຄຸ້ມຄອງ ແລະ ກວດກາກິດຈະການໂຮງງານອຸດສາຫະກຳປຸງແຕ່ງ ຕາມມາດຕາ 3, 4, 5 ຂອງດຳລັດສະບັບນີ້.

**ມາດຕາ 7: ການແບ່ງຂັ້ນຄຸ້ມຄອງຂອງຂະແໜງ ອຸດສາຫະກຳ ແລະ ທັດຖະກຳ.**

ກະຊວງອຸດສາຫະກຳ ແລະ ທັດຖະກຳ ມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 44 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ. ນອກນັ້ນ ຍັງມີໜ້າທີ່ພິຈາລະນາ ແບ່ງຄວາມຮັບຜິດຊອບໃຫ້ພະແນກອຸດສາຫະກຳ ແລະ ທັດຖະກຳ ແຂວງ, ນະຄອນຫລວງວຽງຈັນ ໃນການຄຸ້ມຄອງກິດຈະການໂຮງງານອຸດສາຫະກຳປຸງແຕ່ງ ບົນພື້ນຖານການແບ່ງຂັ້ນຄຸ້ມຄອງ, ຊຶ່ງກຳນົດໄວ້ໃນມາດຕາ 45, 46 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ, ພ້ອມທັງປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ໂດຍອີງໃສ່ສະພາບເງື່ອນໄຂ, ຈຸດພິເສດ ແລະ ຄວາມເປັນຈິງຂອງແຕ່ລະທ້ອງຖິ່ນ.

**ມາດຕາ 8: ການຈັດຕັ້ງປະຕິບັດ**

ມອບໃຫ້ ກະຊວງອຸດສາຫະກຳ ແລະ ທັດຖະກຳ, ບັນດາກະຊວງ, ອົງການທຽບເທົ່າ, ອົງການປົກຄອງທ້ອງຖິ່ນ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 9: ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ ຫລື ລະບຽບການ ທີ່ປະກາດໃຊ້ໃນເມື່ອກ່ອນ ຫາກຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ນາຍົກລັດຖະມົນຕີ

ບຸນຍັງ ວໍລະຈິດ